ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ : 624/PCD

ນະຄອນຫຼວງວຽງຈັນ, ວັນທີ 27 ເມສາ 2018

ຮຽນ : ທ່ານ ຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ ທີ່ເຄົາລົບ ແລະ ນັບຖື

ເລື່ອງ : ເປີດເຜີຍລາຍລະອຽດຂໍ້ມູນກ່ຽວກັບຜົນການເຄື່ອນໄຫວທຸລະກິດ ປີ 2017

- ອີງຕາມໜັງສື ຮຽກໃຫ້ເປີດເຜີຍຂໍ້ມູນຂອງຕະຫລາດຫລັກຊັບລາວ ສະບັບເລກທີ 114/ຕລຊລ, ວັນທີ 24 ເມສາ 2018.

ເພື່ອຕອບສະໜອງ ຕາມໜັງສືຮຽກດັ່ງກ່າວ, ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຂໍຮຽນຊີ້ແຈ້ງລາຍລະອຽດ ດັ່ງນີ້:

1. ຊີ້ແຈ້ງຜົນການດຳເນີນທຸລະກິດປະຈຳປີ 2017 ທີ່ຫລຸດໂຕນ ຈາກແຜນຄາດຄະເນ.

ປີ 2017	ແຜນຄາດຄະເນ	ປະຕິບັດຕົວຈິງ	ຄິດເປັນເປີເຊັນ
ລາຍຮັບ (ຕື້ກີບ)	342,52	**45,38**	13,24%
ກຳໄລສຸດທິ (ຕື້ກີບ)	181,90	**6,72**	3,69%
ກຳໄລຕໍ່ຮຸ້ນ (ກີບ)	312,54	**16,56**	5,29%

ສາຍເຫດຕົ້ນຕໍ ທີ່ພາໃຫ້ການປະຕິບັດລາຍຮັບຂອງໂຄງການ ບໍ່ໄດ້ຕາມຄາດໝາຍ ດັ່ງນີ້:

- ❖ ການປະຕິບັດໂຄງການຕົວຈິງ ກ່ຽວກັບລາຍຮັບຖືກເລື່ອນອອກໄປ ແລະ ຊັກຊ້າບໍ່ເປັນໄປຕາມແຜນການ;
- ❖ ບໍລິສັດໄດ້ນຳໃຊ້ບ້ອງເງິນຂອງແຜນງົບປະມານປະຈຳປີ 2017 ເພື່ອລົງທຶນເຂົ້າໃສ່ໂຄງການພັດທະນາໃໝ່ ຈຳນວນ 05 ໂຄງການ ສຳລັບກະກຽມແຜນລາຍຮັບໃໝ່ ໃນໄລຍະ 05 ປີ ແຕ່ 2018 ຫາ 2023;
- ❖ ການຊຳລະໜີ້ຈາກເຈົ້າຂອງໂຄງການ ໃຫ້ແກ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແມ່ນລັກສະນະຊັກຊ້າບໍ່ໄປຕາມແຜນການ.

ສຳນັກງານຕັ້ງຢູ່ໂຮງແຮມວຽງຈັນພລາຊາ ຊັ້ນ 6, ຖະໜົນ ສາຍລົມ, ບ້ານ ຫັດສະດີ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ ສປປ ລາວ
ໂທລະສັບ: +856 (21) 265 394, ແຟັກ: +856 (21) 265394. ເວັບໄຊທ໌: www.phousy.com; www.pcdlao.com

2. ຊີ້ແຈ້ງທຸກໂຄງການຕາມແຜນປີ 2017 ທີ່ບໍ່ສາມາດປະຕິບັດໄດ້ ຫລື ຖືກໂຈະ;

3. ຊີ້ແຈງໂຄງການທີ່ສາມາດຮັບຮູ້ເປັນລາຍຮັບໄດ້ໃນປີ 2017 ສະເພາະ.

ຕາຕະລາງຊີ້ແຈ້ງຄຳຖາມ ຂໍ້ 2 ແລະ ຂໍ້ 3 ແຜນປະຈຳປີ 2017 ແລະ ຜົນງານການປະຕິບັດຕົວຈິ່ງ

(ຫົວໜ່ວຍ: 1 ລ້ານກີບ)

ລ/ດ	ຊື່ໂຄງການ	ແຜນ 2017	ປະຕິບັດໄດ້ຕົວຈິ່ງ	ໝາຍເຫດ
1	ໂຄງການກໍ່ສ້າງຍົກລະດັບເສັ້ນທາງເລກທີ 3503 ເມືອງໂພນທອງ ແຂວງຫລວງພະບາງ (ກິ່ວເຈຍ)	32,353	0	ຢູ່ໃນລະຫວ່າງການດັດແກ້ແບບບາງຊ້ວງ ທີ່ບໍ່ເໝາະສົມຄືນໃໝ່ ເພື່ອນຳສະເໜີເຈົ້າຂອງໂຄງການ.
2	ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ແຕ່ບ້ານອູ ຫາ ບ້ານສີບຸນເຮືອງ	137,446	44,622	ຍັງມີບໍລິມາດຈຳນວນໜຶ່ງ ທີ່ປະຕິບັດໄດ້ບໍທັນໄດ້ເຮັດບົດບັນທຶກ ກວດກາໃນວັນທີ 31/12/2017 ມູນຄ່າ 4.462 ຕື້ກີບ.
3	ໂຄງການກໍ່ສ້າງທາງລຽບຊາຍແດນລາວ-ຫວຽດນາມ, ກຳປູເຈ້ຍ ແຂວງອັດຕະປື	120,074	0	ຢູ່ລະຫວ່າງການມອບໂອນວຽກ ລະຫວ່າງກະຊວງປ້ອງກັນປະເທດ ແລະ ກະຊວງໂຍທາທິການແລະຂົນສົ່ງ.
4	ວຽກງານສ້ອມແປງທາງຫລວງແຫ່ງຊາດ ໂຄງການ 01 ເລກທີ 17 A , 70.01 km	4,485	3,048	ປະຕິບັດໄດ້ 67.95 %.
5	ວຽກງານສ້ອມແປງທາງຫລວງແຫ່ງຊາດ ໂຄງການ 02 ເລກທີ R3 , 42 km	9,224	0	ບໍລິສັດໄດ້ສົ່ງໂຄງການຄືນໃຫ້ເຈົ້າຂອງໂຄງການ ເພື່ອໃຫ້ບໍລິສັດ ອື່ນຈັດຕັ້ງປະຕິບັດ.
6	ວຽກງານສ້ອມແປງທາງຫລວງແຫ່ງຊາດ ໂຄງການ 03 ເລກທີ 1C , 20 km	2,252	2,252	ປະຕິບັດໄດ້ 100%
7	ໂຄງການຕາຝັ່ງຕ້ານເຈື່ອນ	36,686	0	ລັດຖະບານຍັງບໍ່ທັນໄດ້ອະນຸມັດ ຍັງພິຈາລະນາຮ່ວງເງິນລົງທຶນຢູ່
	ລວມ :	**342,520**	**49,922**	

4. ຊີ້ແຈງຄວາມເປັນໄປໄດ້ຂອງແຜນພັດທະນາໂຄງການໃໝ່ (5 ໂຄງການ) ຂອງປີ 2018

❖ **ຄວາມເປັນໄປໄດ້ຂອງແຜນພັດທະນາໂຄງການໃໝ່ຈຳນວນ 5 ໂຄງການ ໃນສົກປີ 2018-2019 ມີດັ່ງນີ້:**

1. ຈຳນວນ 5 ໂຄງການນີ້ ແມ່ນໄດ້ຜ່ານຂັ້ນຕອນການສຶກສາອອກແບບຄິດໄລ່ປະເມີນມູນຄ່າລະອຽດ ໂດຍຜ່ານການກວດກາຂອງເຈົ້າຂອງໂຄງການ ກໍຄື ພະແນກໂຍທາທິການ ແລະ ຂົນສົ່ງ ປະຈຳແຂວງ ແລະ ກົມຂົວ-ທາງກະຊວງໂຍທາທິການ ແລະ ຂົນສົ່ງກວດກາ ແລະ ຮັບຮອງເບື້ອງຕົ້ນ ເພື່ອສະ ເໜີ ໃຫ້ໜ່ວຍງານປະເມີນຜົນໂຄງການ ເພື່ອຢັ້ງຢືນວ່າໂຄງການດັ່ງກ່າວແມ່ນມີຄວາມຈຳເປັນ ແລະ ໃຫ້ຜົນ ຕອບແທນເສດຖະກິດໃນການກໍ່ສ້າງ;
2. ບັນດາໂຄງການດັ່ງກ່າວ ແມ່ນນອນຢູ່ໃນແຜນບູລິມະສິດຂອງແຕ່ລະແຂວງ ເພາະເປັນໂຄງການ ທີ່ມີ ຄວາມໝາຍຄວາມສຳຄັນ ໃນການພັດທະນາພື້ນຖານໂຄງລ່າງ ເພື່ອໃຫ້ລະບົບຕ່າງຄົມມະນາຄົມຂົນ ສົ່ງໃຫ້ເຊື່ອມຈອດກັນ ເພື່ອເສີມຂະຫຍາຍໃຫ້ເສດຖະກິດຂອງແຂວງດີຂຶ້ນ ໂດຍອີງໃສ່ດ້ານວຽກງານ ຂົນສົ່ງຕ່າງໆ;
3. ບັນດາໂຄງການດັ່ງກ່າວ ໄດ້ມີການປະເມີນຜົນຮັບຮອງ ເພື່ອເຂົ້າແຜນງົບປະມານຂອງສະພາແຫ່ງຊາດ ແລະ ເພື່ອເປັນບ່ອນອີງໃນການຊຳລະສະສາງ;
4. ຈຳນວນ 5 ໂຄງການນີ້ ບໍລິສັດພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ແມ່ນໄດ້ມີແຜນການລົງທຶນ ໃນ ສົກປີ 2018-2019 ໂດຍໄດ້ນຳສະເໜີກັບ ບັນດາສະຖາບັນການເງິນ ເພື່ອສະໜອງທຶນຊຸກຍູ້ໃນການ ກໍ່ສ້າງ;
5. ເຈົ້າຂອງໂຄງການແມ່ນໄດ້ເອົາໃຈໃສ່ພົວພັນກັບກະຊວງແຜນການ, ກະຊວງການເງິນ ເພື່ອຮັບຮອງເອົາ ໂຄງການດັ່ງກ່າວນີ້ ໃຫ້ໄດ້ຈັດຕັ້ງປະຕິບັດຕາມແຜນພັດທະນາ ຂອງແຕ່ລະແຂວງ ທີ່ສະເໜີຫາ ລັດຖະບານ.

ດັ່ງນັ້ນ, ຈຶ່ງຂໍຊີ້ແຈ້ງ ໃຫ້ ທ່ານຜູ້ອຳນວຍການ ຕະຫຼາດຫຼັກຊັບລາວ ແລະ ຜູ້ຖືຮຸ້ນບໍລິສັດພູສີກໍ່ສ້າງແລະ ພັດທະນາມະຫາຊົນ ທຸກໆທ່ານໃຫ້ຮັບຮູ້ ແລະ ເຂົ້າໃຈ ຕາມລາຍລະອຽດນີ້ດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖື

ບໍລິສັດພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ
ຜູ້ອຳນວຍການບັນຊີ-ການເງິນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
Phousy Construction and Development Public Company
ມະຫາຊົນ ຫຼວງ ວຽງຈັນ

ທ່ານ ອາໂນໄລ ສີຫາລາດ

ສຳນັກງານຕັ້ງຢູ່ໂຮງແຮມວຽງຈັນພລາຊາ ຊັ້ນ 6, ຖະໜົນ ສາຍລົມ, ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ສປປ ລາວ
ໂທລະສັບ: +856 (21) 265 394, ແຟັກ: +856 (21) 265394. ເວັບໄຊທ໌: www.phousy.com; www.pcdlao.com